


# ໂຄງການສະໜັບສະໜູນສ້າງຄວາມອາດສາມາດໃຫ້ກັບຈຸລະວິສາຫະກິດ, ວິສາຫະກິດຂາໜາດນ້ອຍ ແລະ ກາງ ໃນການຮັບມືກັບວິກິດການຜົນກະທົບຈາກ COVID-19

## ຂໍ້ມູນໂຄງການໂດຍຫຍໍ້:

**ຜູ້ປະກອບທຶນສົມທົບ:**
ອົງການສະວິດເພື່ອການພັດທະນາ ແລະ ການຮ່ວມມື (SDC)

**ໄລຍະຂອງໂຄງການ:**
ທັນວາ 2020 - ພຶດສະພາ 2022

**ຮ່ວມງານ:**
- ກົມສົ່ງເສີມວິສາຫະກິດຂະໜາດນ້ອຍ ແລະ ກາງ (DOSMEP)
- ສະພາການຄ້າ ແລະ ອຸດສາຫະກຳ ແຫ່ງຊາດລາວ (LNCCI) ແລະ ສູນບໍລິການວິສາຫະກິດຂະໜາດນ້ອຍ ແລະ ກາງ (SSC)
- ເຄືອຂ່າຍຜູ້ໃຫ້ບໍລິການພັດທະນາທຸລະກິດ (BDS) ແລະ ສະຖາບັນການເງິນ

**ກຸ່ມເປົ້າໝາຍ:**
ຜູ້ປະກອບການຂອງຈຸນລະວິສາຫະກິດ, ວິສາຫະກິດຂະໜາດນ້ອຍ ແລະ ກາງ (MSMEs) ແລະ ຜູ້ປະກອບການໃໝ່ ລວມທັງຜູ້ອອກແຮງງານ ແລະ ຄອບຄົວຂອງເຂົາເຈົ້າ ທີ່ໄດ້ຮັບຜົນກະທົບຈາກພາວະເສດຖະກິດຫຼັງພະຍາດໂຄວິດ.

**ເຂດເປົ້າໝາຍ:**
ນະຄອນຫຼວງວຽງຈັນ ແລະ ແຂວງຫຼວງພະບາງ
(ໂດຍມີຂົງເຂດຂະຫຍາຍໄປອີກແຂວງອື່ນເພີ່ມຕື່ມ)



ຈຸນລະວິສາຫະກິດ, ວິສາຫະກິດຂະໜາດນ້ອຍ ແລະ ກາງ (MSME) ໃນປະເທດລາວ ເປັນກະດູກສັນຫຼັງຂອງການສ້າງວຽກເຮັດງານທຳ ແລະ ການຈ້າງງານ, ຊຶ່ງກວມເອົາຫຼາຍກວ່າ 80 ສ່ວນຮ້ອຍຂອງການຈ້າງງານ ທົ່ວປະເທດ.

ເສດຖະກິດ ສປປ ລາວ ແລະ ໂດຍສະເພາະຈຸນລະວິສາຫະກິດ, ວິສາຫະກິດຂະໜາດນ້ອຍ ແລະ ກາງ (MSME) ໄດ້ຮັບຜົນກະທົບດ້ານລົບຈາກການແຜ່ລະບາດຂອງພະຍາດໂຄວິດ-19. ຈຸນລະວິສາຫະກິດ, ວິສາຫະກິດຂະໜາດນ້ອຍ ແລະ ກາງ (MSME) ສາມາດມີບົດບາດທີ່ສຳຄັນໃນການຮັບມືຕໍ່ຜົນກະທົບດ້ານເສດຖະກິດຈາກການແຜ່ລະບາດ ແລະ ໃນການຂັບເຄື່ອນການຟື້ນຟູໃຫ້ມີຄວາມຍືນຍົງ ແລະ ສາມາດຮັບມືກັບວິກິດການ.

ໂຄງການນີ້ຂອງອົງການແຮງງານສາກົນ (ILO) ຈະສະໜັບສະໜູນຈຸນລະວິສາຫະກິດ, ວິສາຫະກິດຂະໜາດນ້ອຍ ແລະ ກາງ (MSMEs) ເພື່ອໃຫ້ສາມາດຟື້ນຟູໄດ້ໃນໄລຍະນີ້ ແລະ ສາມາດຂະຫຍາຍໄປສູ່ໂອກາດໃນການເຕີບໂຕ, ຕາມແຜນຍຸດທະສາດສົ່ງເສີມວິສາຫະກິດຂະໜາດນ້ອຍ ແລະ ກາງຂອງ ສປປ ລາວ.

## ຜົນຮັບທີ່ຄາດໝາຍໄວ້

ຈຸນລະວິສາຫະກິດ, ວິສາຫະກິດຂະໜາດນ້ອຍ ແລະ ກາງ (MSMEs) ໃນ ສປປ ລາວ ມີຄວາມຍືນຍົງ, ມີຄວາມສາມາດຮັບມືກັບວິກິດການ ແລະ ສ້າງໂອກາດດ້ານເສດຖະກິດ ແລະ ການຈ້າງງານທີ່ມີຄຸນຄ່າ, ປະກອບສ່ວນເຂົ້າໃນການຟື້ນຟູຈາກພະຍາດໂຄວິດ-19 ໃນ ສປປ ລາວ.

## ຈຸດປະສົງຂອງໂຄງການ

ສ້າງຄວາມອາດສາມາດໃຫ້ຜູ້ປະກອບການຂອງຈຸນລະວິສາຫະກິດ, ວິສາຫະກິດຂະໜາດນ້ອຍ ແລະ ກາງ (MSMEs) ທີ່ເປັນແມ່ຍິງ ແລະ ຜູ້ຊາຍ ແລະ ຜູ້ປະກອບການໃໝ່ ສາມາດ:

- ເຂົ້າເຖິງການບໍລິການດ້ານການເງິນເພີ່ມຂຶ້ນ
- ເຂົ້າເຖິງຂໍ້ມູນຂ່າວສານທີ່ກ່ຽວຂ້ອງກັບພະຍາດໂຄວິດ-19 ເພີ່ມຂຶ້ນ
- ເຂົ້າເຖິງການບໍລິການພັດທະນາທຸລະກິດເພີ່ມຂຶ້ນ

## ຈັດຕັ້ງປະຕິບັດ ໂດຍຜ່ານ

- ການໃຫ້ຄຳແນະນຳ ແລະ ຂໍ້ສະເໜີແນະດ້ານນະໂຍບາຍ ວິທີການສະໜອງການສະໜັບສະໜູນດ້ານການເງິນໃຫ້ແກ່ ຈຸນລະວິສາຫະກິດ, ວິສາຫະກິດຂະໜາດນ້ອຍ ແລະ ກາງ (MSMEs) ລະຫວ່າງ ແລະ ຫຼັງເກີດວິກິດການພະຍາດໂຄວິດ-19.
- ສະໜັບສະໜູນໃຫ້ແກ່ສະຖາບັນການເງິນ ເພື່ອໃຫ້ຈຸນລະວິສາຫະກິດ, ວິສາຫະກິດຂະໜາດນ້ອຍ ແລະ ກາງ (MSMEs) ສາມາດເຂົ້າເຖິງການເງິນ.
- ສະໜັບສະໜູນໃຫ້ຄຳປຶກສາດ້ານທຸລະກິດກ່ຽວກັບໂຄວິດ-19 ສຳລັບຈຸນລະວິສາຫະກິດ, ວິສາຫະກິດຂະໜາດນ້ອຍ ແລະ ກາງ (MSMEs).
- ເຜີຍແຜ່ຂໍ້ມູນຂ່າວສານດ້ານການສະໜັບສະໜູນຄວາມອາດສາມາດດ້ານທຸລະກິດໃຫ້ແກ່ຈຸນລະວິສາຫະກິດ, ວິສາຫະກິດຂະໜາດນ້ອຍ ແລະ ກາງ (MSMEs) ຜ່ານຫຼາຍຊ່ອງທາງ.
- ສະໜັບສະໜູນບໍລິການພັດທະນາອີງຕາມທຸລະກິດ ເພື່ອໃຫ້ດຳເນີນງານຕໍ່ໄດ້ ແລະ ສືບຕໍ່ຂະຫຍາຍໂຕ.
- ຈັດງານວັນຜູ້ປະກອບການລາວ ເພື່ອສົ່ງເສີມການເປັນຜູ້ປະກອບການໃຫ້ແກ່ແມ່ຍິງ ແລະ ຜູ້ຊາຍ ໃນ ສປປ ລາວ.

**ຂໍ້ມູນຕິດຕໍ່ພົວພັນ**
ທ່ານນາງ ແອນຈາລີ ພາເທລ, ຜູ້ປະສານງານໂຄງການ
ຕຶກສະພາການຄ້າ ແລະ ອຸດສາຫະກຳ ແຫ່ງຊາດລາວ
ຖະໜົນໄກສອນພົມວິຫານ, ບ້ານໂພນພະເນົາ, ເມືອງໄຊເສດຖາ
ນະຄອນຫຼວງວຽງຈັນ, ສປປ ລາວ.

ມືຖື: +856 20 7633 2234
ອີເມລ: patela@ilo.org
ເວັບໄຊທ໌: www.ilo.org/asia